# <u>ແຈ້ງການ</u>

ຕອບສະໜອງຕາມຄຳເຊີນຢ່າງເປັນທາງການ ຂອງພະນະທ່ານລັດຖະມົນຕີວ່າການກະຊວງການຕ່າງປະເທດເອຢິບ, ຕວກກີ ແລະ ສະວິດເຊີແລນ, ຄະນະຜູ້ແທນແຫ່ງ ສປປ ລາວ ນຳໂດຍພະນະທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ພ້ອມດ້ວຍຄະນະ ຈະເດີນທາງໄປຢ້ຽມຢາມສອງຝ່າຍ ຢ່າງເປັນທາງການທີ່ນະຄອນຫລວງໄຄໂຣ ໃນລະຫວ່າງວັນທີ 3-4 ເມສາ 2008, ເຂົ້າຮ່ວມກອງປະຊຸມປຶກ ສາຫາລືອາຊີ - ຕາເວັນອອກກາງຄັ້ງທີ II (Asia-Middle East Dialogue II) ທີ່ເມືອງ Sharm El Sheikh ປະເທດ ເອຢິບ ໃນລະຫວ່າງວັນທີ 5-6 ເມສາ 2008 ແລະ ຫລັງຈາກນັ້ນ ສືບຕໍ່ເດີນທາງຢ້ຽມຢາມສອງຝ່າຍຢ່າງເປັນທາງ ການ ຢູ່ປະເທດຕວກກີ ໃນລະຫວ່າງວັນທີ 7-8 ເມສາ 2008 ແລະ ຢ້ຽມຢາມເຮັດວຽກທີ່ປະເທດສະວິດເຊີແລນ ໃນ ໄລຍະແຕ່ວັນທີ 9-11 ເມສາ 2008 ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງ ສປປ ລາວ ກັບບັນດາປະເທດດັ່ງກ່າວໃຫ້ສູງ ແລະ ນັບມື້ເກີດດອກອອກຜົນຂຶ້ນເລື້ອຍໆ.